## ຄຳແນະນຳສຳລັບກົດໝາຍວ່າດ້ວຍການຂໍຕໍ່ເງິນຊ່ວຍເຫຼືອ
## ສະຫວັດດີການສັງຄົມເພີ້ມ (SSI) ໃໝ່ ແລະ ຂໍ້ວຄາວສຳລັບຊາວ
## ຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມ

*ມີຜົນບັງຄັບໃຊ້ນັບແຕ່ ວັນທີ 1 ເດືອນ ຕຸລາ 2008ເປັນຕົ້ນໄປ.*

ເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ແມ່ນເງິນຊ່ວຍເຫຼືອໃຫ້ແກ່ຜູ້ເຖົ້າຜູ້ແກ່ ແລະ ຜູ້ເສັຽອົງຄະທີ່ມີລາຍໄດ້ຕ່ຳ. ຕັ້ງແຕ່ປີ 1996 ເປັນຕົ້ນມາເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ມີໄວ້ສະໜອງໃຫ້ແກ່ຊາວອົບພະຍົບ ແລະ ຊາວຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມກຸ່ມອື່ນໆໃດນຶ່ງເປັນໄລຍະພຽງແຕ່ເຈັດປີເທົ່ານັ້ນ. ກົດໝາຍໃໝ່ "ວ່າດ້ວຍການຂໍຕໍ່ເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ໃຫ້ແກ່ຜູ້ເຖົ້າຜູ້ແກ່ ແລະ ອົບພະຍົບທີ່ເສັຽອົງຄະ" (ກົດໝາຍເລກທີ່ 110-328 (Public Law 110-328), ໄດ້ຍືດເວລາໃຫ້ເງິນຊ່ວຍເຫຼືອແກ່ຊາວຕ່າງດ້າວຜູ້ທີ່ມີເງື່ອນໄຂຄົບຖ້ວນອອກໄປຕື່ມອີກ ເພື່ອໃຫ້ເຂົາເຈົ້າໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປອີກຢ່າງໜ້ອຍເປັນເວລາສອງປີ.

ໜັງສືສະບັບນີ້ ຈະໃຫ້ຄຳຕອບບາງອັນ ທີ່ເປັນຄຳຖາມມັກມີກ່ຽວກັບກົດໝາຍໃໝ່ນີ້.

**1. ຂ້ອຍເຊົາໄດ້ຮັບເງິນສະຫວັດດີການສັງຄົມເພີ້ມ (SSI) ຍ້ອນວ່າຂ້ອຍໄດ້ຮັບເງິນຊ່ວຍເຫຼືອນີ້ຄົບກຳນົດເຈັດປີແລ້ວ. ກົດໝາຍນີ້ຈະມີຜົນປະໂຫຍດຕໍ່ຂ້ອຍບໍ່? (ຖ້າທ່ານຫາກບໍ່ເຄີຍໄດ້ຂໍການຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ນີ້ມາກ່ອນ, ໃຫ້ເບິ່ງຂໍ້ 7)**

ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອນີ້ຖ້າສະພາບຂອງທ່ານຫາກຖືກຕາມເງື່ອນໄຂ**ຂໍ້ໃດຂໍ້ນຶ່ງ**ທີ່ບົ່ງໄວ້ດັ່ງຕໍ່ລົງໄປນີ້:

**ກ). ທ່ານມີອາຍຸຕ່ຳກວ່າ 18 ປີ ຫຼືມີອາຍຸສູງກວ່າ 70 ປີ.**

ຕົວຢ່າງເຊັ່ນ: ບຸກຄົນຜູ້ນຶ່ງທີ່ເຂົ້າມາອາເມຣິກາໃນເດືອນກັນຍາ1996 ເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ຂອງລາວໄດ້ຖືກຕັດໃນເດືອນຕຸລາ 2003 ຫຼັງຈາກຄົບກຳນົດເຈັດປີແລ້ວ. ຖ້າປັດຈຸບັນນີ້ລາວຫາກມີອາຍຸເກີນກວ່າ 70 ປີ ລາວສາມາດມີເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ນີ້ຕໍ່ໄປອີກຕື່ມສອງປີ, ນັບແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ລາວໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມອີກໃນປີທີສາມ ຖ້າຫາກລາວໄດ້ຍື່ນຄຳຮ້ອງຂໍເປັນສັນຊາດແຕ່ຍັງບໍ່ທັນໄດ້ເປັນເທື່ອພາຍໃນເວລາທີ່ບໍ່ກາຍເດືອນຕຸລາ ປີ 2010.

**ຂ). ທ່ານມີໜັງສືໃຫ້ຢູ່ອາເມຣິກາໄດ້ແບບຖາວອນ (ມີບັດຂຽວ) ທີ່ຍັງບໍ່ທັນເຖິງຫົກປີເທື່ອ.**

ຕົວຢ່າງເຊັ່ນ: ບຸກຄົນຜູ້ທີ່ໄດ້ຮັບອານຸຍາດໃຫ້ລີ້ໄພຢູ່ໃນອາເຣິກາໃນເດືອນຕຸລາ 1998, ເລີ້ມໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເສັຽອົງຄະໃນເດືອນພຶສຈິກາ 1998 ແຕ່ໄດ້ຖືກຕັດໃນເດືອນພຶສຈິກກາ 2005 ເຊິ່ງເປັນເວລາເຈັດປີນັບແຕ່ມື້ໄດ້ຮັບອານຸຍາດໃຫ້ລີ້ໄພ. ລາວໄດ້ເຮັດຄຳຮ້ອງຂໍບັດຂຽວໃນເດືອນພຶສຈິກາປີ 1999 ແລະ ພາຍຫຼັງທີ່ໄດ້ລໍຖ້າເປັນເວລາຍາວນານ, ໃນທີ່ສຸດລາວກໍໄດ້ຮັບບັດຂຽວໃນເດືອນ ມົກກະຣາປີ 2004. ລາວສາມາດມີເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອເພີ້ມຕື່ມອີກເຖິງສອງປີ ນັບຕັ້ງແຕ່ເດືອນຕຸລາ 2008 ເປັນຕົ້ນໄປ ແລະ ລາວຍັງສາມາດທີ່ຈະໄດ້ຮັບເງິນຊ່ວຍເຫຼືອນີ້ໃນປີທີ່ສາມຕໍ່ໄປອີກ ຂໍພຽງແຕ່ວ່າລາວເຮັດຄຳຮ້ອງຂໍເປັນສັນຊາດພາຍໃນເວລາທີ່ບໍ່ກາຍເດືອນຕຸລາ 2010.

**ຄ). ທ່ານໄດ້ຍື່ນຄຳຮ້ອງເພື່ອຂໍຢູ່ຖາວອນ (ຂໍບັດຂຽວ) ພາຍໃນສີ່ປີພາຍຫຼັງທີ່ທ່ານເລີ້ມໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງສັງຄົມເພີ້ມ (SSI) ແລ້ວ.**

ຕົວຢ່າງເຊັ່ນ: ອົບພະຍົບຜູ້ນື່ງເຂົ້າມາອາເມຣິກາ ໃນເດືອນກຸມພາ 1999 ເລີ້ມໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມ (SSI) ເມື່ອເວລາລາວມີອາຍຸ 55 ປີ ໃນປີ 2000. ໃນປີ 2003 ລາວໄດ້ເຮັດຄຳຮ້ອງຂໍບັດຂຽວ ແລະ ກໍໄດ້ຮັບບັດນັ້ນ. ສະຖານະພາບເປັນຄົນທີ່ຢູ່ອາເມຣິກາໄດ້ຖາວອນຂອງລາວຈະເລີ້ມມີຜົນນັບແຕ່ເດືອນກຸມພາ 1999 ເປັນຕົ້ນມາ ຊື່ງແມ່ນເວລາທີ່ລາວເຂົ້າມາອາເມຣິກາ. ໃນເດືອນມີນາ 2006, ເງິນຊ່ວຍເຫຼືອສະຫວັດດີການສັງຄົມຂອງລາວໄດ້ຖືກຕັດ ໂດຍອີງຕາມຂໍ້ກຳນົດເຈັດປີຂອງກົດໝາຍ. ປັດຈຸບັນນີ້ ລາວມີອາຍຸໄດ້ 63 ປີ ແລະ ລາວສາມາດໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມຕື່ມອີກໄດ້ເຖິງສອງປີ ເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ລາວສາມາດທີ່ຈະໄດ້ຮັບເງິນຊ່ວຍເຫຼືອປີທີ່ສາມຕໍ່ໄປອີກ ຖ້າລາວຫາກໄດ້ເຮັດຄຳຮ້ອງຂໍເປັນສັນຊາດພາຍໃນເວລາທີ່ບໍ່ກາຍເດືອນ ຕຸລາ ປີ 2010.

**ງ). ຖ້າທ່ານຫາກເຂົ້າມາໃນອາເມຣິກາໃນນາມເປັນຊາວຄິວບາ ຫຼື ຊາວໄຮຕີ**

ຕົວຢ່າງເຊັ່ນ: ບຸກຄົນຜູ້ນື່ງໄດ້ຮັບສະຖານະພາບເຂົ້າເມືອງໃນນາມເປັນຊາວຄິວບາ ຫຼື ຊາວໄຮຕີໃນເດືອນພຶສພາ 1997 ລາວໄດ້ຮັບເງິນ SSI ໃນປີ 2000 ຍ້ອນວ່າລາວເສັຽອົງຄະ ແລະ ລາວໄດ້ຮັບເງິນນັ້ນຈົນເຖິງເດືອນມິຖຸນາ 2004 ຊື່ງເປັນເວລາທີ່ມັນໄດ້ຖືກຕັດ. ບັດນີ້ ລາວສາມາດໄດ້ຮັບເງິນຊ່ວຍເຫຼືອເພີ້ມຕໍ່ໄປອີກໄດ້ເຖິງສອງປີ ຊື່ງເລີ້ມແຕ່ເດືອນ ຕຸລາ ປີ 2008 ເປັນຕົ້ນໄປ ແລະ ລາວສາມາດທີ່ຈະໄດ້ຮັບເງິນຊ່ວຍເຫຼືອໃນປີທີ່ສາມຕໍ່ໄປອີກ ຖ້າລາວຫາກເຮັດຄຳຮ້ອງຂໍເປັນສັນຊາດພາຍໃນເວລາທີ່ບໍ່ກາຍເດືອນຕຸລາ 2010.

**ຈ). ທ່ານຢູ່ໃນສະພາບລໍຖ້າການເນລະເທດສົ່ງກັບຄືນປະເທດເດີມ ຫຼື ຍົກຍ້າຍອອກໄປຈາກອາເມຣິກາ**

ຕົວຢ່າງເຊັ່ນ: ບຸກຄົນຜູ້ທີ່ຢູ່ໃນການລໍຖ້າການເນລະເທດສົ່ງກັບຄືນປະເທດເດີມໃນເດືອນທັນວາ 1996 ລາວມີເງື່ອນໄຂໄດ້ຮັບເງິນ SSI ໃນເດືອນມົກກະຣາ 1997 ຍ້ອນວ່າລາວເສັຽອົງຄະ ແລະ ເງິນນັ້ນໄດ້ຖືກຕັດລົງໃນເດືອນມົກກະຣາ 2003 ແຕ່ລາວສາມາດທີ່ຈະໄດ້ຮັບເງິນຊ່ວຍເຫຼືອນັ້ນຕື່ມອີກສອງປີ ນັບແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ລາວຈະບໍ່ມີເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປໃນປີທີ່ສາມ ເນື່ອງຈາກລາວບໍ່ມີສິດຍື່ນຄຳຮ້ອງຂໍເປັນສັນຊາດໄດ້.

**ສ). ທ່ານກຳລັງລໍຖ້າຄຳຮ້ອງຂໍເປັນສັນຊາດຢູ່ ຫຼືລໍຖ້າພິທີການເຂົ້າສາບານຕົວ.**

ຕົວຢ່າງເຊັ່ນ: ບຸກຄົນຜູ້ນື່ງທີ່ເຂົ້າມາອາເມຣິກາໃນນາມອົບພະຍົບ ໃນເດືອນທັນວາ 1998 ແລະເລີ້ມໄດ້ຮັບເງິນ SSI ໃນເດືອນມົກກະຣາ 2000 ເມື່ອເວລາອາຍຸລາວໄດ້ 65 ປີ. ເງິນ SSI ຂອງລາວໄດ້ຖືກຕັດລົງໃນເດືອນມົກກະຣາ 2006 ເນື່ອງຈາກຄົບກຳນົດເຈັດປີຕາມ. ລາວໄດ້ ເຮັດຄຳຮ້ອງຂໍເປັນສັນຊາດໃນເດືອນທັນວາ 2005 ແລະ ໄດ້ໄປສຳພາດໃນເດືອນທັນວາ 2006 ເຖິງແມ່ນວ່າລາວຈະໄດ້ຮັບອານຸຍາດໃຫ້ເປັນສັນຊາດອາເມຣິກາແລ້ວກໍ່ຕາມ ແຕ່ລາວຍັງບໍ່ທັນໄດ້ຮັບໃບຢັ້ງຢືນສັນຊາດເທື່ອ ເນື່ອງຈາກການລໍຖ້າສືບສວນປະຫວັດຂອງລາວ. ລາວມີເງື່ອນໄຂໄດ້ຮັບເງິນ SSI ຕື່ມອີກສອງປີ ຊື່ງຈະເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ ແລະ ລາວສາມາດໄດ້ຮັບເງິນນັ້ນຕໍ່ໄປອີກໃນປີທີ່ສາມ ຖ້າລາວຫາກຍັງບໍ່ທັນໄດ້ຮັບໃບສັນຊາດເທື່ອໃນເວລານັ້ນ. (ໝາຍເຫດ: ບຸກຄົກດັ່ງກ່າວນີ້ ຍັງມີເງື່ອນໄຂໄດ້ຮັບເງິນ SSI ອີກຄືກັນກັບໃນກໍຣະນີຢູ່ຂໍ້ (ກ).

**2. ທຸກຄົນທີ່ຖືກຕັດເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ເນື່ອງຈາກໄດ້ຮັບເງິນນີ້ຄົບກຳນົດເຈັດປີແລ້ວແມ່ນມີເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອເພີ້ມພາຍໃຕ້ກົດຫມາຍການຂໍຕໍ່ຄວາມຊ່ວຍເຫຼືອສະບັບນີ້ບໍ່?**

ບໍ່. ຊາວ ຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມທີ່ບໍ່ມີເງື່ອນໄຂຖືກຕ້ອງຕາມກໍຣະນີທີ່ບົ່ງໄວ້ຂ້າງເທິງນີ້ ຈະບໍ່ມີສິດໄດ້ຮັບເງິນຊ່ວຍເຫຼືອຕື່ມອີກສອງປີ. ຕົວຢ່າງເຊັ່ນ: ອົບພະຍົບຜູ້ນຶ່ງທີ່ເຂົ້າມາອາເມຣິກາ ໃນເດືອນຕຸລາ 1997 ທີ່ມີອາຍຸ 33 ປີ ແລະ ໄດ້ຮັບໃບອານຸຍາດໃຫ້ຢູ່ຖາວອນໃນປີ 1999 (ນຶ່ງປີພາຍຫຼັງທີ່ລາວມາເຖິງ) ອາເມຣິກາ ແລະ ຫຼັງຈາກນັ້ນ ລາວກໍໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ເມື່ອເວລາລາວມີອາຍຸ 35 ປີ ເນື່ອງຈາກວ່າລາວເສັຽອົງຄະ. ເງິນ SSI ຂອງລາວໄດ້ຖືກຕັດໃນເດືອນພຶສຈິກາ 2005 ແລະ ປັດຈຸບັນນີ້ລາວມີອາຍຸ 43 ປີ. ລາວຍັງບໍ່ທັນໄດ້ເຮັດຄຳຮ້ອງຂໍ ເປັນສັນຊາດເທື່ອ. ຕາບໃດທີ່ລາວຍັງບໍ່ໄດ້ເຮັດຄຳຮ້ອງຂໍສັນຊາດ ລາວຈະບໍ່ມີເງື່ອນໄຂທີ່ຈະຂໍຮັບເງິນ (SSI) ຕໍ່ໄປອີກໄດ້ເພາະ ວ່າລາວໄດ້ເປັນຜູ້ທີ່ຢູ່ອາເມຣິກາຢ່າງຖາວອນເປັນເວລາເກີນກວ່າຫົກປີແລ້ວ.

**3. ຖ້າຂ້ອຍຫາກຖືກຕັດເງິນ SSI ຂ້ອຍຈະໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມໄດ້ຕື່ມອີກຈັກປີ?**

ຖ້າທ່ານຫາກມີເງື່ອນໄຂ ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອອີກຕື່ມສອງປີ ເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ຖ້າວ່າ, ຫຼັງຈາກນັ້ນ ເຖິງແມ່ນວ່າທ່ານກໍ່ຍັງບໍ່ເປັນສັນຊາດເທື່ອ, ແຕ່ວ່າໃບຄຳຮ້ອງຂອງທ່ານກຳລັງລໍຖ້າການພິຈາລະນາຢູ່ ທ່ານອາດຈະໄດ້ຮັບເງິນ SSI ຕໍ່ໄປອີກໃນປີທີ່ສາມຈົນເຖິງເດືອນກັນຍາ ວັນທີ 30, 2011.

**4. ຂ້ອຍຕ້ອງເຮັດແນວໃດ ເພື່ອຈະສາມາດເລີ້ມໄດ້ຮັບເງິນ SSI ອີກຕໍ່ໄປໄດ້?**

ທາງຫ້ອງການສະຫວັດດີການສັງຄົມໄດ້ອອກປະກາດໃຫ້ຕໍ່ເງິນ SSI ແກ່ຊາວຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມທີ່ມີເງື່ອນໄຂໄດ້ຮັບການຊ່ວຍເຫລືອ ແຕ່ຖືກຕັດເງິນ SSI ໄປເນື່ອງຈາກວ່າໄດ້ຄົບກຳຫນົດເຈັດປີແລ້ວ. ແຕ່ເຖິງຢ່າງໃດກໍ່ຕາມ, ປັດຈຸບັນນີ້ ທາງພວກເຮົາ ຍັງບໍ່ທັນຮູ້ຈັກເທື່ອວ່າເມື່ອໃດທາງຫ້ອງການສະຫວັດດີການສັງຄົມຈະອອກປະກາດດັ່ງກ່າວນີ້.

<u>**ສະນັ້ນ, ພວກເຮົາຂໍແນະນຳໃຫ້ທ່ານຈົ່ງໄປຕິດຕໍ່ກັບທາງຫ້ອງການສະຫວັດດີການສັງຄົມທ້ອງຖິ່ນໃນເຂດຂອງທ່ານອາໄສຢູ່ດ້ວຍຕົວທ່ານເອງ ເພື່ອຂໍໃຫ້ເຂົາເຈົ້າເລີ້ມໃຫ້ເງິນ SSI ແກ່ທ່ານຄືນອີກ.**</u> ທ່ານອາຈຕິດຕໍ່ທາງຫ້ອງການສະຫວັດດີການສັງຄົມໄດ້ ທີ່ເບີໂທ 1-800-772-1213. ຖ້າທ່ານຫູບໍ່ຄ່ອຍດີ ໃຫ້ຕິດຕໍ່ທາງ TTY ນໍ້າເບີ 1-800-325-0778.

ຖ້າເງິນຊ່ວຍເຫຼືອສະຫວັດດີການສັງຄົມຂອງທ່ານ ຫາກຖືກຕັດໃນເດືອນຕຸລາ ຫຼືເດືອນພຶສຈິກກາ 2008 ແລະທ່ານໄດ້ໄປຫາທາງຫ້ອງການສະຫວັດດີການສັງຄົມ ເພື່ອຂໍໃຫ້ເຂົາເຈົ້າໃຫ້ເງິນຊ່ວຍເຫລືອຕໍ່, ທາງຫ້ອງການສະຫວັດດີການສັງຄົມຄວນຕໍ່ໃຫ້ທ່ານທັນທີ. ເລີ້ມແຕ່ເດືອນທັນວາ 2008 ເປັນຕົ້ນໄປ, ຊາວຕ່າງດ້າວຜູ້ທີ່ມີເງື່ອນໄຂຖືກຕ້ອງຕາມຂໍ້ກຳນົດໃນການຂໍຕໍ່ເງິນຊ່ວຍເຫຼືອ ບໍ່ຄວນຈະເສັຽເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (<u>SSI)</u> ຍ້ອນຂໍ້ຈຳກັດຂອງກົດຫມາຍທີ່ໃຫ້ກຳນົດເຈັດປີ. ເຂົາເຈົ້າຈະຕ້ອງໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປອີກເປັນເວລາຢ່າງຫນ້ອຍສອງປີ.

<u>ຖ້າເງິນຊ່ວຍເຫຼືອສະຫວັດດີການສັງຄົມຂອງທ່ານ ຫາກຖືກຕັດກ່ອນຫນ້າເດືອນຕຸລາ ວັນທີ 1, 2008</u> ທາງຫ້ອງການສະຫວັດດີການສັງຄົມ ຕ້ອງການຈະເບິ່ງຫລັກຖານກ່ຽວກັບລາຍໄດ້ຂອງທ່ານໃນແຕ່ລະເດືອນທີ່ທ່ານໄດ້ຮັບ ຫຼັງຈາກເດືອນຕຸລາ ວັນທີ 1, 2008 ເປັນຕົ້ນມາແລະອາດຕ້ອງການຫລັກຖານກ່ຽວກັບສະຖານະພາບການເປັນຜູ້ຢູ່ອາໃສທີ່ຢູ່ຖາວອນ (LPR) ຫຼືໜັ່ສືການຂໍເປັນສັນຊາດ. ຖ້າທ່ານຫາກບໍ່ມີຫລັກຖານຢັ້ງຢືນວ່າ ສະຖານະພາບ ການເຂົ້າເມືອງຖືກຕ້ອງຕາມກົດຫມາຍທາງຫ້ອງການສະຫວັດດີການສັງຄົມຈະໃຫ້ທ່ານເຊັນຫນັງສື ອານຸຍາດໃຫ້ເຂົາເຈົ້າກວດເບິ່ງໜັງສືທີ່ກ່ຽວຂ້ອງກັບສະຖານະພາບ

ການເຂົ້າເມືອງຂອງທ່ານ. ທາງຫ້ອງການຈະກວດເບິ່ງລາຍໄດ້ປະຈຳເດືອນຂອງທ່ານ ເລີ້ມແຕ່ເດືອນຕຸລາ ວັນທີ 1, 2008 ຖ້າທ່ານສາມາດພິສູດກັບຄືນຫລັງໄດ້ໃນເວລານັ້ນວ່າທ່ານມີເງື່ອໄຂເໝາະສົມໃນການໄດ້ຮັບເງິນຊ່ວຍເຫລືອນີ້, ທາງຫ້ອງການຈະຈ່າຍເງິນນັ້ນໃຫ້ທ່ານກັບຄືນເຖິງເດືອນຕຸລາ ວັນທີ 1, 2008 ເຖິງແມ່ນວ່າ ທ່ານຈະເລີ້ມໄປຂໍການຊ່ວຍເຫຼືອໃນເວລາໃດກໍ່ຕາມ. ຖ້າບໍ່ດັ່ງນັ້ນ, ທ່ານຈະໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ພຽງແຕ່ເດືອນທີ່ທ່ານສາມາດແຈ້ງຫລັກຖານພິສູດວ່າທ່ານມີເງື່ອໄຂເໝາະສົມເທົ່ານັ້ນ. ໃຫ້ເບິ່ງຂໍ້ 7 ເພື່ອຢາກຮູ້ລະອຽດເພີ້ມເຕີມ ກ່ຽວກັບຄຳຮ້ອງໃໝ່

### 5. ຂ້ອຍເຄີຍໄດ້ຮັບເງິນຊ່ວຍເຫລືອສະຫວັດດີການສັງຄົມເພີ້ມ (SSI) ເນື່ອງຈາກຂ້ອຍເສັງຄົງຄະ ແຕ່ກໍ່ໄດ້ຖືກຕັດໄປ ເນື່ອງຈາກຄົບກຳໜົດເຈັດປີ. ຂ້ອຍຈະຕ້ອງໄດ້ແຈ້ງການເສັງອົງຄະຂອງຂ້ອຍ ກ່ອນທີ່ຂ້ອຍຈະໄດ້ຮັບເງິນ SSI ອີກໃໝ່ບໍ່?

ບໍ່. ທາງຫ້ອງການສະຫວັດດີການສັງຄົມຮຽກຮ້ອງໃຫ້ຜູ້ທີ່ເສັງອົງຄະຜູ້ທີ່ບໍ່ໄດ້ຮັບເງິນ SSI ຫລາຍກວ່າ ນຶ່ງປີ ແຈ້ງໜັງສືກ່ຽວກັບການເສັງອົງຄະຂອງເຂົາເຈົ້າ ກ່ອນທີ່ເຂົາເຈົ້າຈະໄດ້ຮັບເງິນຊ່ວຍເຫລືອນັ້ນອີກ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນເວລາປັດຈຸບັນນີ້ ທາງຫ້ອງການສະຫວັດດີການສັງຄົມ ບໍ່ຕ້ອງການໃຫ້ຜູ້ທີ່ເສັງອົງຄະແຈ້ງໜັງສືກ່ຽວກັບການເສັງອົງຄະຂອງເຂົາເຈົ້າ ກ່ອນເພື່ອໃຫ້ໄດ້ຮັບເງິນ SSI. ໝາຍເຫດ: ສຳລັບຜູ້ທີ່ເຮັດຄຳຮ້ອງຂໍເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມໃໝ່ທີ່ອີງໃສ່ ການເສັງອົງຄະເປັນພື້ນຖານນັ້ນ ຈະຕ້ອງແຈ້ງຫລັກຖານກ່ຽວກັບການເສັງອົງຄະຂອງເຂົາເຈົ້າ.

### 6. ຂ້ອຍຍັງໄດ້ຮັບເງິນຊ່ວຍເຫລືອສະຫວັດດີການສັງຄົມເພີ້ມຢູ່, ແຕ່ວ່າ ຂໍ້ກຳໜົດເຈັດປີ ຂອງກົດໝາຍນີ້ແມ່ນຖືກກັບກໍລະນີຂອງຂ້ອຍ. ຂ້ອຍຄວນຈະເຮັດສິ່ງໃດສິ່ງນຶ່ງອີກບໍ່ ເພື່ອໃຫ້ແນ່ໃຈວ່າຂ້ອຍຈະໄດ້ຮັບເງິນຊ່ວຍເຫຼືອນີ້ຕື່ມອີກສອງປີ?

ບໍ່. ຖ້າກົດໝາຍຂໍ້ກຳໜົດເຈັດປີຂອງກົດໝາຍຖືກກັບກໍລະນີຂອງທ່ານ ແລະທ່ານຍັງໄດ້ຮັບເງິນ SSI ຢູ່, ປັດຈະບັນນີ້ທ່ານບໍ່ຈຳເປັນຕ້ອງເຮັດຫຍັງຕື່ມອີກ. ຫລັງຈາກນັ້ນ, ທາງຫ້ອງການສະຫວັດດີການສັງຄົມຈະໃຫ້ທ່ານເຊັນໜັງສືໃຫ້ຄຳໝັ້ນສັນຍາວ່າ "ທ່ານຈະໃຊ້ຄວາມພະຍາຍາມໃນທາງທີ່ດີ ແລະ ຊື່ສັດໃນການທີ່ຈະຂໍເປັນສັນຊາດອາເມຣິກາ". ແຕ່ວ່າກົງກັນຂ້າມ, ຖ້າທ່ານຫາກມີເງື່ອນໄຂ ໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປ ທ່ານບໍ່ຕ້ອງໄດ້ເຮັດຫຍັງຕື່ມອີກ. ທາງຫ້ອງການສະຫວັດດີການສັງຄົມຈະໃຫ້ເງິນ SSI ແກ່ທ່ານຕໍ່ໄປເລີຍໂລດ. ທ່ານຈະໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົງຄົມເພີ້ມຕໍ່ໄປອີກເປັນກຳໜົດທັງໝົດເກົ້າປີ. ຖ້າຫາກເກົ້າປີທີ່ທ່ານໄດ້ຮັບການຊ່ວຍເຫລືອຄົບກຳໜົດກ່ອນໜ້າ ເດືອນຕຸລາ 2011, ທ່ານອາຈໄດ້ຮັບເງິນຊ່ວຍເຫຼືອຈົນເຖິງເດືອນຕຸລາ 2011, ເທົ່ານັ້ນ ຖ້າທ່ານຫາກຄຳຮ້ອງຂໍເປັນສັນຊາດຂອງທ່ານກຳລັງລໍຖ້າການພິຈາລະນາຢູ່.

ບາງທ່ານຈະຖືກຕັດເງິນ SSI ໃນເດືອນຕຸລາ 2008 ແລະ ເດືອນພຶສຈິກາ 2008 ເງິນຊ່ວຍເຫຼືອຂອງເຂົາເຈົ້າອາດຈະຖືກຕັດຊົ່ວຄາວ. ບໍ່ນານເຂົາເຈົ້າກໍ່ຈະໄດ້ຮັບເງິນຊ່ວຍເຫຼືອນັ້ນຄືນອີກ. ໃຫ້ຕິດຕໍ່ຫາທາງຫ້ອງການສະຫວັດດີການສັງຄົມໂດຍດ່ວນ ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອສະຫວັດດີການສັງຄົມດ່ວນ. ໃຫ້ທ່ານຕິດຕໍ່ຫາທາງຫ້ອງເງິນຊ່ວຍເຫຼືອ Medicaid ໃນຣັດຂອງທ່ານຖ້າເງິນຊ່ວຍເຫຼືອຫາກຖືກຕັດຍ້ອນການຜິດພາດ. ທ່ານຕ້ອງຂໍອຸທອນ ຖ້າຫາກເງິນຊ່ວຍເຫຼືອ Medicaid ຂອງທ່ານຫາກຖືກຕັດຄືງ.

**7. ອາຍຸຂ້ອຍໄດ້ 65 ປີ ຫຼືຂ້ອຍໄດ້ເສັ້ງອິງຄະ. ເຂົາເຈົ້າບອກຂ້ອຍວ່າ ຂ້ອຍຈະບໍ່ໄດ້ຮັບການຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ ເພາະວ່າ ກຳໜົດເຈັດປີຂອງຂ້ອຍໄດ້ຫມົດເວລາແລ້ວ. ຂ້ອຍບໍ່ ເຄີຍໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມນີ້ມາກ່ອນ. ກົດຫມາຍໃຫມ່ນີ້ຈະຊ່ວຍຂ້ອຍໄດ້ບໍ່?**

ຜູ້ລີ້ໄພ, ອົບພະຍົບ ແລະ ຊາວຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມກຸ່ມອື່ນໆໃດນຶ່ງ ້<u>ທີ່ຂໍເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ</u> (SSI)<u> ຄັ້ງທຳອິດພາຍໃນ ຫຼື ຫລັງຈາກເດືອນຕຸລາ 2008</u> ອາດຈະ ມີເງື່ອນໄຂໄດ້ຮັບເງິນ SSI ເຊິ່ງມັນຂຶ້ນຢູ່ກັບການໄດ້ຮັບສະຖານະພາບການເປັນອົບພະຍົບ, ຜູ້ລີ້ໄພ, ຊາວຕ່າງດ້າວ ທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມອື່ນໆ ຄັ້ງທຳອິດຂອງທ່ານ.

ຖ້າທ່ານ ໄດ້ຮັບສະຖານະພາບທີ່ກ່າວມານັ້ນ<u>ຫລັງຈາກເດືອນຕຸລາ 2002</u>, ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອຈົນເຖິງ ເດືອນຕຸລາ 2011.

- ຖ້າທ່ານໄດ້ຮັບອານຸຍາດ <u>ລະຫວ່າງເດືອນຕຸລາ 1999 ແລະ ເດືອນຕຸລາ 2002</u>, ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອເລີ້ມ ແຕ່ເວລາທີ່ທ່ານໄດ້ເຮັດຄຳຮ້ອງຂໍເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມຈົນເຖິງເວລາຄົບຮອບເກົ້າປີ ຂອງການໄດ້ສະຖານະພາບການເປັນອົບພະຍົບ, ຜູ້ລີ້ໄພ ຫຼື ຊາວຕ່າງດ້າວ ທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມອື່ນໆ. ພາຍຫລັງໄລຍະເວລານີ້ຫາກຈົບລົງ, ທ່ານຈະສາມາດໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປອີກຈົນເຖິງເດືອນຕຸລາ 2011 ພຽງແຕ່ຢູ່ໃນກໍລະນີທີ່ວ່າ ທ່ານຢູ່ໃນລະຫວ່າງການລໍຖ້າປ່ຽນສັນຊາດຢູ່ ຫຼື ທ່ານໄດ້ເປັນສັນຊາດແລ້ວເທົ່ານັ້ນ.

- ຖ້າທ່ານໄດ້ຮັບສະຖານະພາບທີ່ກ່າວມານັ້ນກ່ອນຫນ້າເດືອນຕຸລາ 1999, ທ່ານບໍ່ມີເງື່ອນໄຂໄດ້ຮັບເງິນ SSI ທີ່ຂໍຕໍ່ໃຫມ່ດັ່ງກ່າວນີ້.

ຄວນຈຳໄວ້: ກົດຫມາຍໃໝ່ສະບັບພິເສດນີ້ <u>ແມ່ນໃຊ້ສະເພາະຕໍ່ຊາວຕ່າງດ້າວຜູ້ທີ່ເຮັດຄຳຮ້ອງຂໍການຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ </u>(SSI)<u> ຄັ້ງທຳອິດພາຍໃນ ຫຼື ຫລັງຈາກເດືອນຕຸລາ 2008 ເທົ່ານັ້ນ..</u>

**8. ຂ້ອຍຈະເຮັດແນວໃດ ຖ້າຂ້ອຍຫາກຍັງບໍ່ທັນເປັນສັນຊາດເທື່ອຫລັງຈາກເກົ້າປີແລ້ວ?**

ຖ້າທ່ານຫາກຍັງບໍ່ທັນເປັນສັນຊາດເທື່ອ ຫລັງຈາກໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມຕື່ມອີກສອງປີແລ້ວ ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອຕື່ມອີກໃນປີທີ່ສາມຕໍ່ໄປ ຖ້າທ່ານໄດ້ຂໍເປັນສັນຊາດ ແລະ ຍັງລໍຖ້າການພິຈາລະນາຢູ່. ເຖິງຢ່າງໃດກໍ່ຕາມ, ເງິນຊ່ວຍຈະຕ້ອງຖືກຕັດລົງຫລັງຈາກເດືອນກັນຍາ ວັນທີ 30 2011. ທ່ານຕ້ອງເປັນສັນຊາດອາເມຣິກັນແລ້ວໃນເວລານັ້ນ ເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມຕໍ່ໄປ, ເວັ້ນເສັຽແຕ່ວ່າຣັຖສະພາອາເມຣິກາຈະຜ່ານກົດຫມາຍໃໝ່.

**9. ທີ່ຜ່ານມາ ເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ຂອງຂ້ອຍໄດ້ຖືກຕັດ ເນື່ອງຈາກຂໍ້ກຳໜົດເຈັດປີຂອງກົດຫມາຍ. ຂ້ອຍຈະໄດ້ຮັບເງິນຊ່ວຍເຫຼືອທີ່ຂ້ອຍໄດ້ເສັຽໄປນັ້ນຄືນບໍ່?**

ບໍ່. ແຕ່ວ່າທ່ານອາຈໄດ້ຮັບເງິນ SSI ຕື່ມອີກສອງປີ ເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ຖ້າການຊ່ວຍເຫຼືອຂອງທ່ານຫາກຖືກຕັດ ເນື່ອງຈາກຖືກຈຳກັດໂດຍຂໍ້ກຳນົດເຈັດປີຂອງກົດໝາຍ, ທ່ານອາຈໄດ້ຮັບເງິນຊ່ວຍເຫຼືອຍ້ອນຫລັງຄືນເຖິງເດືອນຕຸລາ 2008 ແລະ ໄດ້ຮັບຕໍ່ໄປຈົນເຖິງ ເດືອນຕຸລາ 2010. ເຖິງຢ່າງໃດກໍ່ຕາມ, ທາງຫ້ອງການສະຫວັດດີການສັງຄົມຈະບໍ່ໃຫ້ເງິນຊ່ວຍເຫຼືອຂອງເດືອນໃດໆ ກ່ອນຫນ້າເດືອນດັ່ງກ່າວນັ້ນ.

**10. ຂ້ອຍໄດ້ໄປຫ້ອງການ ການຊ່ວຍເຫຼືອສະຫວັດດີການສັງຄົມປະຈຳທ້ອງຖິ່ນຂອງຂ້ອຍ ເພື່ອຈະຮັບເອົາການຊ່ວຍເຫລືອສະຫວັດດີການສັງຄົມເພີ້ມ ( SSI) ຄືນອີກ ຫາກແຕ່ວ່າ ເຂົາເຈົ້າບອກຂ້ອຍວ່າຂ້ອຍບໍ່ມີເງື່ອນໄຂທີ່ຈະຂໍຄືນໄດ້ອີກ. ຖ້າອີງໃສ່ຂໍ້ມູນຕາມໜັງສືສະບັບນີ້ຂ້ອຍເຊື່ອວ່າ ຂ້ອຍມີສິດຂໍຄືນໄດ້. ຂ້ອຍຄວນຈະເຮັດຈັ່ງໃດດີ?**

ໃຫ້ຕິດຕໍ່ຫ້ອງການບໍລິການກົດໝາຍໃນທ້ອງຖິ່ນຢ່າງທັນທີທັນໃດ. ພະນັກງານບາງຄົນໃນທີ່ນັ້ນອາດສາມາດຊ່ວຍທ່ານໄດ້.

**11. ຂ້ອຍຍັງຕ້ອງການເສັງພາສາອັງກິດ ແລະ ສອບເອົາສັນຊາດຢູ່ບໍ່ ເພື່ອຈະໃຫ້ໄດ້ເປັນສັນຊາດອາເມຣິກາ?**

ກົດໝາຍໃໝ່ ບໍ່ໄດ້ປ່ຽນເງື່ອນໄຂຈຳເປັນເພື່ອຈະເປັນສັນຊາດອາເມຣິກາ, ເວັ້ນເສັຽແຕ່ວ່າ ທ່ານມີອາຍຸຕ່ຳກວ່າ 18 ປີ ຫ້ອງການສະຫວັດດີການສັງຄົມຈະຮຽກຮ້ອງໃຫ້ທ່ານເຊັນໜັງສືໃຫ້ຄຳໝັ້ນສັນຍາວ່າ "ທ່ານຈະໃຊ້ຄວາມພະຍາຍາມໃນທາງທີ່ດີ ແລະ ຊື່ສັດໃນການທີ່ຈະຂໍເປັນສັນຊາດອາເມຣິກາ" ຕາມຄວາມສາມາດຂອງຕົນທັງທາງດ້ານຮ່າງກາຍແລະມັນສະໝອງເປັນຢ່າງດີທີ່ສຸດ. ຖ້າວ່າທ່ານພິການດ້ານໃດດ້ານນຶ່ງທີ່ເຮັດໃຫ້ທ່ານບໍ່ສາມາດຮຽນພາສາອັງກິດໄດ້ ໃຫ້ທ່ານຂໍຄຳປຶກສານຳຜູ້ຊ່ຽວຊານດ້ານການເຂົ້າເມືອງຂອງຊາວຕ່າງດ້າວ. ຣັຖບານອາດສາມາດອະນຸຍາດທ່ານບໍ່ຕ້ອງສອບເສັງພາສາອັງກິດ, ປະຫວັດສາດ ແລະ ການປົກຄອງຂອງຣັຖບານໄດ້.

**12. ດຽວນີ້ເວລາໄດ້ກາຍຫົກເດືອນແລ້ວທີ່ຂ້ອຍໄດ້ຍື່ນຄຳຮ້ອງຂໍເປັນບຸກຄົນອາໃສຢູ່ໃນປະເທດນີ້ຢ່າງຖືກຕ້ອງ (ມີບັດຂຽວ) ຫລື ສັດຊາດອາເມຣິກາ. ຂ້ອຍສາມາດເຮັດຫຍັງໄດ້ບໍ່ເພື່ອຈະໃຫ້ຝ່າຍບໍລິການດ້ານການຂໍສັນຊາດອາເມຣິກັນ ແລະ ຄົນຕ່າງຊາດ (CIS) ດຳເນີນການພິຈາລະນາຄຳຮ້ອງຂອງຂ້ອຍໃຫ້ໄວຂຶ້ນກວ່າເກົ່າ ໄດ້?**

ມີ. ຍ້ອນວ່າໄດ້ຮັບມີຜົນມາຈາກຄະດີຟ້ອງຮ້ອງທີ່ບໍ່ດົນມານີ້ ຊື່ Kaplan v. Chertoff, ຊາວຕ່າງຊາດຜູ້ທີ່ຖືກຂໍ້ຈຳກັດໂດຍຂໍ້ກຳນົດເຈັດປີ ຍັງສາມາດມີສິດໄດ້ຮັບລະບົບດຳເນີນການພິຈາລະນາຄຳຮ້ອງຂອງເຂົາເຈົ້າແບບ"ເລັ່ງ" (ດ່ວນ) ໄດ້. ຖ້າທ່ານໄດ້ລໍຖ້າມາເປັນເວລາຫລາຍກວ່າຫົກເດືອນແລ້ວ ກະລຸນາໃຫ້ໂທຫາ CIS ທີ່ເບີໂທ 1-800-889-4369 ແລະ ຂໍໃຫ້ເຂົາເຈົ້າເລັ່ງດຳເນີນການພິຈາລະນາຄຳຮ້ອງຂອງທ່ານ. ການດຳເນີນການພິຈາລະນາຄຳຮ້ອງນີ້ຍັງສາມາດນຳມາໃຊ້ໄດ້ ແມ່ນແຕ່ວ່າກົດໝາຍນີ້ໄດ້ຖືກຜ່ານອອກມາແລ້ວກໍ່ຕາມ.

ຖ້າທ່ານຍັງບໍ່ທັນໄດ້ຂໍບັດຂຽວ ຫລື ຂໍເປັນສັນຊາດເທື່ອ ໃນເວລາທີ່ທ່ານຍື່ນຄຳຮ້ອງໃຫ້ບອກ CIS ໃຫ້ຊາບວ່າທ່ານຂໍໃຫ້ໃບຄຳຮ້ອງຂອງທ່ານຖືກເລັ່ງພິຈາລະນາ ເພາະວ່າທ່ານຈັດຢູ່ໃນ “Kaplan class (ລະບົບດຽວກັນກັບກໍລະນີແຄບແພລນ).”

**13. ຂ້ອຍບໍ່ສາມາດຈະຂໍບັດຂຽວ ຫລື ຂໍເປັນສັນຊາດ ໄດ້. ມີການຊ່ວຍເຫລືອໃດບໍ່ທີ່ສາມາດຊ່ວຍຂ້ອຍໄດ້?**

ມີ. ຍ້ອນວ່າໄດ້ຮັບມີຜົນມາຈາກຄະດີຟ້ອງຮ້ອງທີ່ບໍ່ດົນມານີ້ ຊື່ Kaplan v. Chertoff, ຊາວຕ່າງຊາດຜູ້ທີ່ຖືກຂໍ້ຈຳກັດໂດຍຂໍ້ກຳໜົດເຈັດປີ ຍັງອາດຈະສາມາດໄດ້ຮັບການຍົກເວັ້ນໃນການເສັຽຄ່າທຳນຽມຍື່ນຄຳຮ້ອງຖ້າຫາກເຂົາເຈົ້າຂໍຍົກເວັ້ນ. ໃນເວລາທີ່ທ່ານຂໍບັດຂຽວ ຫລື ຂໍເປັນສັນຊາດ, ຢ່າລືມຖາມເອົາ "ໃບຍົກເວັ້ນການເສັຽຄ່າທຳນຽມ," ແລະ ບອກໃຫ້ CIS ຊາບວ່າທ່ານຈັດຢູ່ໃນ “Kaplan class (ລະບົບດຽວກັນກັບກໍລະນີແຄບແພລນ).”ລະບົບບໍລິການສັນຊາດ ແລະ ຄົນຕ່າງຊາດ (CIS) ວ່າທ່ານຢູ່ໃນ “Kaplan class.”

| |
|---|
| ຖ້າວ່າທ່ານມີຄຳຖາມອັນໃດເພີ້ມເຕີມ ກະລຸນາຕິດຕໍ່ຫ້ອງການບໍລິການດ້ານກົດໝາຍ, ຫ້ອງການໃຫ້ການຊ່ວຍເຫລືອດ້ານກົດໝາຍ ແລະ ອົງການຊ່ວຍເຫລືອອື່ນໆ ເພື່ອຊ່ວຍອະທິບາຍໃຫ້ທ່ານຟັງ |